**LOWELL PUBLIC SCHOOLS**
Henry J. Mroz Central Administration Offices
155 Merrimack Street
Lowell, MA 01852

*ຂ້າງລຸ່ມນີ້ແມ່ນຂໍ້ມູນກ່ຽວກັບຊີວະປະຫວັດຂອງຜູ້ເຂົ້າຮອບສຸດທ້າຍທັງສາມທ່ານທີ່ໄດ້ສະໝັກຕຳແໜ່ງຜູ້ອຳນວຍການໂຮງຮຽນ Lowell High School - Ian Charles, Michael Fiato ແລະ Sara Pragluski Walsh. ເຊິ່ງຊີວະປະຫວັດດັ່ງກ່າວຈະຖືກນຳສະເໜີຕາມລຳດັບຕົວອັກສອນຄື:*

## IAN CHARLES

Ian N. Charles ໄດ້ເລີ່ມຕົ້ນອາຊີບການສຶກສາໃນຖານະການເປັນຄູສຳຮອງໄລຍະຍາວ ໃນປີ 1998 ເຊິ່ງໄດ້ຮັບໃຊ້ຊຸມຊົນຂອງໂຮງຮຽນ Lowell Public School ໃນສາຂາການສຶກສາພິເສດ, ມະນຸດສາດ ແລະ ສັງຄົມສຶກສາ. ລາວໄດ້ເຮັດວຽກຢູ່ທີ່ Rogers, Robinson ແລະ Pyne Arts ໃນລະຫວ່າງທີ່ຮຽນພາກແລງຢູ່ທີ່ມະຫາວິທະຍາໄລ University of Massachusetts ໃນ Lowell. ລາວເປັນພົນລະເມືອງຂອງ Lowell ໃນລະຫວ່າງທີ່ລາວເຮັດວຽກພາຍໃນອຳນາດການປົກຄອງຂັ້ນເມືອງ. ບັນດາລູກໆຂອງລາວໄດ້ເຂົ້າສຶກສາຢູ່ທີ່ໂຮງຮຽນ Pyne Arts School ຫຼັງຈາກທີ່ກັບມາຈາກລັດ Florida ບ່ອນທີ່ລາວໄດ້ດຳລົງຕຳແໜ່ງໃນສາຂາການສຶກສາຢູ່ທີ່ໂຮງຮຽນ Olympia High School ໃນຖານະຄູສອນວິຊາປະຫວັດສາດ ແລະ ເສດຖະສາດ. ຫຼັງຈາກນັ້ນລາວໄດ້ກັບຄືນໄປທີ່ລັດ Massachusetts ເຊິ່ງລາວໄດ້ເຮັດໜ້າທີ່ເປັນຄູສອນວິຊາສັງຄົມສາດ ຢູ່ທີ່ໂຮງຮຽນ Peabody Middle School ໃນ Cambridge. ໃນຂະນະທີ່ເຮັດວຽກຢູ່ທີ່ໂຮງຮຽນ Peabody Middle School, Mr. Ian Charles ໄດ້ເຂົ້າຮຽນພາກແລງຢູ່ທີ່ວິທະຍາໄລ Cambridge College ຕາມທີ່ລາວໄດ້ດຳເນີນໜ້າວຽກໃນດ້ານການບໍລິຫານການສຶກສາ. ລາວໄດ້ຮັບຕຳແໜ່ງເປັນຜູ້ຊ່ວຍອຳນວຍການຊົ່ວຄາວຢູ່ທີ່ໂຮງຮຽນ Healy Middle School ໃນ Somerville. ລາວໄດ້ຮັບຕຳແໜ່ງຖາວອນໃນຖານະຜູ້ຊ່ວຍອຳນວຍການຂອງໂຮງຮຽນ Winter Hill Community Innovation School.

ຫຼັງຈາກນັ້ນລາວໄດ້ຮັບຕຳແໜ່ງໃນ Medford ເພື່ອຊ່ວຍນຳພາໂຮງຮຽນ McGlynn Middle School. ແມ່ນຊຸມຊົນຂອງໂຮງຮຽນ Medford Public School ແລະ ການປົກຄອງຂັ້ນເມືອງໄດ້ທີຄວາມສົນໃຈຕໍ່ຜົນງານອັນໂດດເດັ່ນຂອງລາວໃນຖານະຫົວໜ້າດ້ານການສຶກສາ. ລາວໄດ້ຮັບຕຳແໜ່ງເປັນຜູ້ຊ່ວຍອຳນວຍການຂອງໂຮງຮຽນ Medford High school ເຊິ່ງລາວໄດ້ເຮັດໜ້າທີ່ດູແລໄລຍະການປ່ຽນສະພາບຂອງນັກຮຽນທີ່ເຂົ້າມາຮຽນໃນຊັ້ນຮຽນປີທີໜຶ່ງ ເຊິ່ງມີນັກຮຽນຫຼາຍກວ່າ 325 ຄົນ ດ້ວຍໝາກຜົນອັນສຳເລັດ. ຜົນງານຂອງລາວໄດ້ຮັບຄວາມສົນໃຈຈາກໂຮງຮຽນ Charter School (ໂຮງຮຽນໃນການດູແລຂອງລັດຖະບານ) ໃນເມືອງ Dorchester ເຊິ່ງຕໍ່ມາລາວໄດ້ຮັບໜ້າທີ່ເປັນຜູ້ອຳນວຍການຂອງໂຮງຮຽນ Codman Academy.

Ian Nigel Charles ໄດ້ສໍາເລັດການສຶກສາລະດັບປະລິນຍາຕີໃນສາຂານະໂຍບາຍສາທາລະນະ ແລະ ການບໍລິຫານດ້ວຍຄວາມສົນໃຈໃນດ້ານລັດຖະສາດຈາກມະຫາວິທະຍາໄລ University of Massachusetts ໃນ Lowell ປີ 1999. ນອກຈາກນັ້ນ, Mr. Charles ຍັງໄດ້ສໍາເລັດການສຶກສາລະດັບປະລິນຍາໂທສາຂາການສຶກສາດ້ານຫຼັກສູດການສຶກສາ ແລະ ການຮຽນການສອນ ຈາກມະຫາວິທະຍາໄລ University of Massachusetts ໃນ Lowell ປີ 2002. ນອກນັ້ນລາວຍັງໄດ້ຮັບໃບປະກາດສະນິຍະບັດການສຶກສາຂັ້ນສູງ (C.A.G.S.) ຈາກວິທະຍາໄລ Cambridge College ໃນປີ 2011 ດ້ານສາຂານະໂຍບາຍການບໍລິຫານ ແລະ ການປະຕິຮູບໂຮງຮຽນ. ປະຈຸບັນ Ian N. Charles ເປັນຜູ້ທີ່ກໍາລັງສຶກສາລະດັບປະລິນຍາເອກຢູ່ທີ່ ມະຫາວິທະຍາໄລ Northeastern University, College of Professional Studies (ວິທະຍາໄລການສຶກສາດ້ານສາຂາອາຊີບ) ໃນສາຂາຄວາມເປັນຜູ້ນໍາດ້ານການບໍລິຫານ. ລາວໄດ້ຮັບການຢັ້ງຢືນຈາກລັດ Massachusetts ໃນສາຂາການເປັນຜູ້ນໍາດ້ານການສຶກສາສໍາລັບຊັ້ນຮຽນເກຣດ 5 ຫາ 12. ນອກຈາກນັ້ນ, ລາວຍັງໄດ້ຮັບການຢັ້ງຢືນຈາກລັດ Massachusetts ໃນຖານະຜູ້ບໍລິຫານໂຮງຮຽນສໍາລັບຊັ້ນຮຽນເກຣດຮຽນ k-12.

## MICHAEL FIATO

Michael Fiato ເປັນນັກການສຶກສາທີ່ມີຄວາມຫຼົງໄຫຼ ແລະ ມີວິໄສທັດດ້ວຍປະສົບການຫຼາຍກວ່າ 20 ປີ ໃນສາຂາການສຶກສາພາກລັດ. ປະຈຸບັນ Michael ໄດ້ຮັບຕໍາແໜ່ງເປັນ Targeted Assistance Manager (ຜູ້ບໍລິຫານດ້ານການໃຫ້ຄວາມຊ່ວຍເຫຼືອກຸ່ມເປົ້າໝາຍ) ສໍາລັບລະບົບການສະໜັບສະໜູນທົ່ວລັດ ທີ່ກົມການສຶກສາຂັ້ນປະຖົມ ແລະ ຂັ້ນມັດທະຍົມສຶກສາ. Michael ໄດ້ຮ່ວມມືກັບບັນດາໂຮງຮຽນ ແລະ ອໍານາດການປົກຄອງຂັ້ນເມືອງ ທີ່ມີໂຮງຮຽນທີ່ໄດ້ຮັບການລະບຸວ່າຕ້ອງການການຊ່ວຍເຫຼືອ ແລະ ການແຊກແຊງດ້ານລະບົບຄວາມຮັບຜິດຊອບຈາກລັດ.

ກ່ອນທີ່ຈະເຂົ້າຮ່ວມ DESE, Michael ໄດ້ຮັບຕໍາແໜ່ງເປັນຜູ້ອໍານວຍການຂອງໂຮງຮຽນ Lawrence High School ແລະ ມີຄວາມຮູ້ຢ່າງກວ້າງຂວາງໃນດ້ານການປັບປຸງໂຮງຮຽນ, ການອອກແບບຄືນໃໝ່ ພ້ອມທັງການປະຕິບັດການປ່ຽນແປງໃນລະດັບຊັ້ນມັດທະຍົມ. ໃນຕໍາແໜ່ງການເປັນຜູ້ອໍານວຍການຂອງລາວ, Michael ມີບົດບາດສໍາຄັນໃນການພັດທະນາໂປຣແກຣມຫຼັກສູດວິທະຍາໄລຂັ້ນຕົ້ນ ພ້ອມທັງສາຂາອາຊີບໃຫ້ແກ່ນັກຮຽນ. ເຊິ່ງຮູບແບບນີ້ລວມໄປເຖິງໂປຣແກຣມຝຶກງານ, ເຊິ່ງຮ່ວມມືກັບພາກລັດ ແລະ ເອກະຊົນ ພ້ອມທັງການພັດທະນາສາຂາອາຊີບ ເຊິ່ງນັກຮຽນຈະໄດ້ຮັບໂອກາດໃນການສໍາຫຼວດດ້ານອຸດສະຫະກໍາທີ່ສະເພາະເຈາະຈົງ ແລະ ຫົວຂໍ້ທີ່ກ່ຽວຂ້ອງກັບສາຂາອາຊີບຢ່າງເລິກເຊິ່ງ. ລາວມີຄວາມເຊື່ອທີ່ວ່າ: ນັກຮຽນທຸກຄົນຄວນໄດ້ຮັບການເຂົ້າເຖິງໂປຣແກຣມດ້ານວິຊາການ ແລະ ການເສີມຂະຫຍາຍທັກສະທີ່ຄຸນນະພາບສູງ. ນອກຈາກນັ້ນ, ລາວຍັງໄດ້

ຂະຫຍາຍໂອກາດຜ່ານການລະດົມທຶນ ແລະ ການສະໜັບສະໜູນທີ່ເພີ່ມຂຶ້ນໃຫ້ແກ່ໂຮງລະຄອນ, ດົນຕີ ແລະ ສິລະປະ.

ກ່ອນທີ່ຈະໄດ້ຮັບຕຳແໜ່ງເປັນຜູ້ອຳນວຍການຂອງໂຮງຮຽນພາກເອກະຊົນ, Michael ໄດ້ຮັບຕຳແໜ່ງເປັນຜູ້ອຳນວຍການຂອງໜຶ່ງໃນບັນດາຫົກໂຮງຮຽນພາກລັດຢູ່ທີ່ Lawrence High ເປັນເວລາແປດປີ. ໃນຊ່ວງເວລານັ້ນ, ໂຮງຮຽນທີ່ລາວບໍລິຫານໄດ້ເພີ່ມອັດຕາການສຳເລັດການສຶກສາ ແລະ ໄດ້ຫຼຸດຜ່ອນອັດຕາການປະລະໂຮງຮຽນ ພ້ອມທັງປັບປຸງຜົນການສຶກສາຢ່າງຕໍ່ເນື່ອງໃນລະບົບຄວາມຮັບຜິດຊອບຂອງທົ່ວລັດ. ຕະຫຼອດໄລຍະການເຮັດວຽກຂອງລາວ, Michael ໄດ້ດຳລົງຕຳແໜ່ງທີ່ຫຼາກຫຼາຍ ເຊິ່ງປະກອບມີ: ຄະນະບໍດີຂອງໂຮງຮຽນ, ຄູຝຶກດ້ານກິລາ, ຜູ້ບໍລິຫານໂຮງຮຽນ, ຜູ້ອຳນວຍການຂອງໂຮງຮຽນພາກລັດ ແລະ ເອກະຊົນ. Michael ມີຄວາມສົນໃຈດ້ານການສຶກສາພາກລັດ, ຄວາມສະເໝີພາບ ແລະ ຄວາມຍຸຕິທຳໃນສັງຄົມຈາກປະສົບການຂອງລາວໃນການຈັດຕັ້ງຊຸມຊົນ ແລະ ການພັດທະນາໄວໜຸ່ມໃນໄລຍະເລີ່ມຕົ້ນອາຊີບຂອງລາວ. ລາວເຊື່ອໝັ້ນຢ່າງຈິງຈັງວ່າ: ບັນດາໂຮງຮຽນມັດທະຍົມຕອນປາຍຄວນຮັບປະກັນວ່າ: ນັກຮຽນທຸກຄົນຈະຈົບການສຶກສາດ້ວຍຂັ້ນອັນຊິງກຽດລະດັບຕໍ່ໄປ ໃນຮູບແບບຂອງແຜນຫຼັງຈາກການສຶກສາຂັ້ນມັດທະຍົມທີ່ຈະຜັກດັນພວກເຂົາໃຫ້ປະສົບຜົນສຳເລັດໃນສະຕະວັດທີ 21.

## SARA PRAGLUSKI WALSH

ປະຈຸບັນ Sara Pragluski Walsh, ໄດ້ຈົບການສຶກສາລະດັບປະລິນຍາເອກ ແລະ ທຳການດຳລົງຕຳແໜ່ງເປັນຜູ້ອຳນວຍການຂອງໂຮງຮຽນ Algonquin Regional High School (ARHS). ນາງມີໃບອະນຸຍາດການສອນໃນສາຂາວິຊາຊີວະວິທະຍາ ແລະ ຄະນິດສາດ, ໂດຍເນັ້ນໄປທີ່ດ້ານສະລີລະວິທະຍາ. Dr. Walsh ໄດ້ສືບຕໍ່

ຂະຫຍາຍສາຂາອາຊີບດ້ານວິຊາຊີບການສຶກສາຜ່ານຕຳແໜ່ງຕ່າງໆຂອງລາວໃນຖານະຮອງຜູ້ອຳນວຍການ, ຜູ້ຊ່ວຍອຳນວຍການ ແລະ ຜູ້ອຳນວຍການຂອງໂຮງຮຽນ Springfield Public Schools.

Dr. Walsh ໄດ້ປະສົບຜົນສຳເລັດດ້ານຄວາມກ້າວໜ້າທາງວິຊາຊີບປະສົບການ ຜ່ານໜ້າວຽກຂອງນາງໃນຖານະຜູ້ບໍລິຫານດ້ານຕາຕະລາງເວລາສຳລັບອາຄານຮຽນ ທີ່ໃຫ້ໂອກາດ ແລະ ການເຂົ້າເຖິງທີ່ເພີ່ມຂຶ້ນແກ່ນັກຮຽນທຸກຄົນໃນການລົງທະບຽນຮຽນໃນຫຼັກສູດຂັ້ນສູງ. ນອກຈາກນີ້, ນາງຍັງໄດ້ດຳເນີນງານຮ່ວມກັບໜ່ວຍງານການປະຕິບັດດ້ານການປ່ຽນແປງ ແລະ ການປະຕິບັດເພື່ອຄວາມຍືນຍົງ ຜ່ານລາງວັນຊະນະເລີດຂອງກົມການສຶກສາຂັ້ນປະຖົມ ແລະ ມັດທະຍົມສຶກສາ (DESE) ໃນຊ່ວງໄລຍະນີ້ ເພື່ອການປັບປຸງທີ່ໂດດເດັ່ນກ່ຽວກັບຕົວຊີ້ວັດສຳຄັນອັນສະເພາະເຈາະຈົງ ພ້ອມທັງການປັບປຸງທົ່ວໂຮງຮຽນໂດຍລວມ.

ນາງໄດ້ຈັດຮູບແບບຄວາມມັກຮັກຂອງຕົນໃນດ້ານການຮຽນຮູ້ ໂດຍໄດ້ຮັບປະລິນຍາເອກໃນສາຂາຄວາມເປັນຜູ້ນຳດ້ານການສຶກສາ ແລະ ການກຳກັບດູແລຈາກວິທະຍາໄລ American International College ແລະ ຈົບການສຶກສາລະດັບປະລິນຍາໂທສາຂາວິທະຍາສາດດ້ານສະລີລະວິທະຍາການອອກກຳລັງກາຍຈາກມະຫາວິທະຍາໄລ University of Massachusetts Amherst.

ໃນຖານະຜູ້ນຳ, Dr. Walsh ໄດ້ຮັບການຂະໜານນາມວ່າເປັນຜູ້ທີ່ມີຄວາມກະຕືລືລົ້ນ, ເຊິ່ງເປັນທັງຜູ້ທີ່ກຳນົດ ແລະ ຈັດຮູບແບບຜົນຄາດຫວັງໃນຂະນະທີ່ໃຫ້ການສະໜັບສະໜູນບຸກຄົນອື່ນໆໃຫ້ບັນລຸຄວາມສຳເລັດເກີນຜົນຄາດຫວັງຂອງພວກເຂົາເອງ. ນາງມີຄວາມເຊື່ອໝັ້ນ ແລະ ມີຄວາມຫຼົງໄຫຼຢ່າງແທ້ຈິງກ່ຽວກັບການສ້າງຂີດຄວາມສາມາດໃຫ້ຜູ້ອື່ນດ້ວຍການນຳໃຊ້ການສຶກສາ ແລະ ເປັນແບບຢ່າງຂອງການເປັນຜູ້ຮຽນຮູ້ຕະຫຼອດທັງຊີວິດ. Dr. Walsh ມີຄວາມມຸ່ງໝັ້ນ ພ້ອມທັງມີແຮງບັນດານໃຈທີ່ຈະນຳເອົາປະສົບການທີ່ດີເລີດທາງວິຊາການມາສູ່ຄູ່ຮ່ວມງານທຸກທ່ານ ພ້ອມດຽວກັນນັ້ນເພື່ອນຮ່ວມງານຂອງນາງກໍຊົມເຊີຍຄວາມສາມາດຂອງນາງໃນການດຳເນີນງານ, ການປະກອບສ່ວນ ແລະ ການສ້າງແຮງບັນດານໃຈ ພ້ອມທັງການສື່ສານຢ່າງປະສົບຜົນສຳເລັດ.

ສິລະປະ ແລະ ຫຼັກສູດການເສີມຂະຫຍາຍ ແມ່ນມີຄວາມສຳຄັນຢ່າງເທົ່າທຽມກັນໃນການພັດທະນາປະສົບການທີ່ດີເລີດ ເຊິ່ງນາງໄດ້ສະແດງໃຫ້ເຫັນຜ່ານຄວາມຫຼົງໄຫຼສ່ວນຕົວຂອງນາງ. Dr. Walsh ເປັນຜູ້ທີ່ມີໃຈມັກຮັກໃນດ້ານສິລະປະ ເຊິ່ງນາງຈະເວົ້າເຖິງປະສົບການອັນໜ້າອັດສະຈັນໃຈຂອງຕົນເອງໃນຖານະນັກຮຽນໃນຫ້ອງຮຽນວິຊາສິລະປະ, ວົງເຄື່ອງດົນຕີປະສານສຽງ ແລະ ວົງດຸລິຍາງ. ນາງໄດ້ດຳເນີນງານເພື່ອສ້າງແຮງບັນດານໃຈໃຫ້ແກ່ບັນດາລູກໆຂອງນາງດ້ວຍຄວາມມັກຮັກໃນແບບດຽວກັນນີ້.

ນາງໃຫ້ເຄຣດິດຜົນສຳເລັດອັນຫຼາກຫຼາຍຂອງນາງຕໍ່ປະສົບການອັນໜ້າອັດສະຈັນໃຈຂອງຕົນເອງ ໃນຖານະທີ່ເປັນນັກຮຽນຢູ່ທີ່ໃນໂຮງຮຽນ Springfield Public Schools ຜ່ານຄວາມຫຼາກຫຼາຍ, ການສະໜັບສະໜູນ ແລະ

ໂອກາດຕ່າງໆທີ່ໄດ້ຮັບ. ປະສົບການດັ່ງກ່າວນີ້ໄດ້ນໍາທາງໃຫ້ນາງກັບມາເປັນທັງຜູ້ສິດສອນ ແລະ ເປັນຜູ້ນໍາໃນບ້ານເກີດຂອງນາງໃນລະຫວ່າງໄລຍະທໍາອິດຂອງສາຂາອາຊີບດ້ານການສຶກສາຂອງຕົນເອງ. ເຊິ່ງຄວາມສົນໃຈໃນດ້ານສະລິລະວິທະຍາ ແລະ ຄະນິດສາດຂອງນາງ ໄດ້ຊ່ວຍພັດທະນາການຝຶກຊ້ອມກິລາ ເຊິ່ງເຮັດໃຫ້ນາງໄດ້ເປັນນັກໄຕຣກິລາຄົນເຫຼັກລະດັບໂລກສາມຄັ້ງ, ຜູ້ເຂົ້າແຂ່ງຂັນກິລາສິບຄັ້ງ ລວມທັງເປັນນັກແລ່ນມາຣາທອນ ແລະ ອາລຕ້າມາຣາທອນທີ່ໄດ້ຮັບລາງວັນ.

ສຸດທ້າຍນີ້, Dr. Walsh ມີຄວາມມຸ່ງຫວັງກັບໂອກາດທີ່ຈະນໍາສະເໜີໃນທຸກໆມື້ ເພື່ອເປັນທັງສ່ວນໜຶ່ງຂອງການຮຽນຮູ້ ແລະ ເພື່ອນໍາໄປສູ່ການຮຽນຮູ້ໃນຮູບແບບທີ່ປອດໄພ, ມີຄວາມຮ່ວມມືກັນ ແລະ ມີຄວາມຮອບດ້ານ.